# H1N1 2009 ຢາວັກຊີນໄຂ້ຫວັດໃຫຍ່

***ຊະນິດເຊື້ອຕາຍ***
***("ວັກຊີນໄຂ້ຫວັດໃຫຍ່")***

## ສິ່ງທີ່ທ່ານຈຳເປັນຕ້ອງຮູ້

ມີເອກະສານຂໍ້ມູນຫຼາຍຢ່າງກ່ຽວກັບວັກຊີນໃຫ້ທ່ານເປັນພາສາສະເປນ ແລະພາສາອື່ນໆ. ເບິ່ງທີ່ www.immunize.org/vis.

## 1 ໄຂ້ຫວັດໃຫຍ່ສາຍພັນ H1N1 2009 ແມ່ນຫຍັງ?

ໄຂ້ຫວັດໃຫຍ່ສາຍພັນ H1N1 2009 (ບາງຄັ້ງເອີ້ນວ່າ ໄຂ້ຫວັດໝູ) ມີສາເຫດມາຈາກເຊື້ອໄວຣັສໄຂ້ຫວັດໃຫຍ່ສາຍພັນໃໝ່. ມັນໄດ້ແຜ່ຂະຫຍາຍໄປສູ່ຫຼາຍປະເທດ.

ຄືກັນກັບເຊື້ອໄວຣັສໄຂ້ຫວັດໃຫຍ່ອື່ນໆ, ເຊື້ອໄວຣັສ H1N1 2009 ແຜ່ລາມຈາກຄົນໜຶ່ງໄປຫາອີກຄົນໜຶ່ງ ຜ່ານການ ໄອ, ຈາມ, ແລະບາງຄັ້ງ ໂດຍຜ່ານການຈັບບາຍສິ່ງຂອງທີ່ປົນເປື້ອນເຊື້ອໄວ ຣັສນີ້.

ອາການຂອງການຕິດເຊື້ອໄວຣັສ H1N1 2009 ສາມາດລວມມີ:

- ອິດເມື່ອຍ
- ເປັນໄຂ້
- ເຈັບຄໍ
- ປວດເມື່ອຍກ້າມຊີ້ນ
- ໜາວສັ່ນ
- ໄອ
- ຈາມ

ບາງຄົນຍັງມີອາການຖອກທ້ອງ ແລະປວດຮາກ.

ຄົນສ່ວນຫຼາຍຮູ້ສຶກດີຂື້ນພາຍໃນໜຶ່ງອາທິດ. ແຕ່ບາງຄົນກໍເປັນໂຣກປອດບວມ ຫຼືເຈັບເປັນຮ້າຍແຮງແບບອື່ນໆ. ບາງຄົນອາດຕ້ອງໄດ້ນອນປິ່ນປົວໃນໂຮງໝໍ ແລະບາງຄົນກໍເຖິງກັບເສັຽຊີວິດ.

## 2 ໄຂ້ຫວັດໃຫຍ່ສາຍພັນ H1N1 2009 ແຕກຕ່າງຈາກໄຂ້ຫວັດທຳມະດາ (ໄຂ້ຫວັດຕາມລະດູການ) ແນວໃດ?

ໄວຣັສໄຂ້ຫວັດຕາມລະດູການປ່ຽນແປງປີຕໍ່ປີ, ແຕ່ວ່າ ມັນກໍມີສ່ວນກ່ຽວພັນກັນຢ່າງແໜ້ນແກ່ນ.

ຜູ້ຄົນທີ່ເຄີຍຕິດເຊື້ອໄຂ້ຫວັດໃຫຍ່ໃນອະດີດ ທຳມະດາແລ້ວ ແມ່ນມີພູມຄຸ້ມກັນຕ້ານກັບເຊື້ອໄວຣັສໄຂ້ຫວັດໃຫຍ່ ຕາມລະດູການ (ຮ່າງກາຍສ້າງຄວາມສາມາດໃນການຕໍ່ສູ້ກັບເຊື້ອໄວຣັສຕ່າງໆ).

ເຊື້ອໄວຣັສໄຂ້ຫວັດໃຫຍ່ສາຍພັນ H1N1 2009 ແມ່ນເຊື້ອໄວຣັສສາຍພັນໃໝ່. ມັນແຕກຕ່າງຈາກໄວຣັສໄຂ້ຫວັດໃຫຍ່ ຕາມລະດູການ.

ຄົນສ່ວນຫຼາຍມີພູມຕ້ານທານໃນຮ່າງກາຍຕໍ່ ໄຂ້ຫວັດໃຫຍ່ສາຍພັນ H1N1 2009 ຢູ່ເລັກນ້ອຍ ຫຼື ບໍ່ມີເລີຍ (ຮ່າງກາຍ ບໍ່ໄດ້ຖືກກະກຽມໃຫ້ຕໍ່ສູ້ກັບເຊື້ອໄວຣັສ).

## 3 ວັກຊີນປ້ອງກັນໄຂ້ຫວັດໃຫຍ່ສາຍພັນ H1N1 2009

ຢາວັກຊີນມີໃຫ້ທ່ານເພື່ອປ້ອງກັນໄຂ້ຫວັດໃຫຍ່ສາຍພັນ H1N1 2009.

- ຢາວັກຊີນເຫຼົ່ານີ້ແມ່ນຜະລິດຂື້ນຄືກັນກັບວັກຊີນໄຂ້ຫວັດໃຫຍ່ຕາມລະດູການ.
- ຢາວັກຊີນເຫຼົ່ານີ້ຄາດວ່າມີຄວາມປອດພັຍແລະມີປະສິດທິພາບຄືກັບຢາວັກຊີນໄຂ້ຫວັດໃຫຍ່ຕາມລະດູການ.
- ມັນຈະບໍ່ປ້ອງກັນການເຈັບເປັນທີ່ມີອາການ "ຄ້າຍຄືໄຂ້ຫວັດໃຫຍ່" ຊຶ່ງມີສາເຫດມາຈາກໄວຣັສອື່ນໆ.
- ມັນຈະບໍ່ປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການ. ***ທ່ານຄວນຮັບການສັກວັກຊີນໄຂ້ຫວັດໃຫຍ່ຕາມລະດູການອີກດ້ວຍ, ຖ້າຫາກ ທ່ານຕ້ອງການປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການ.***

ວັກຊີນ**ຊະນິດເຊື້ອຕາຍ** (ວັກຊີນຊຶ່ງຂ້າເຊື້ອໄວຣັສໃນວັກຊີນແລ້ວ) ຈະຖືກສັກເຂົ້າທາງກ້າມຊີ້ນ, ເຊັ່ນດຽວກັນກັບ ວັກຊີນ ປ້ອງກັນໄຂ້ຫວັດໃຫຍ່ປະຈຳປີ. **ເອກະສານນີ້ອະທິບາຍກ່ຽວກັບວັກຊີນຊະນິດເຊື້ອຕາຍ**.

ວັກຊີນ**ຊະນິດເຊື້ອເປັນ, ຊຶ່ງສີດພົ່ນເຂົ້າທາງດັງ** (ວັກຊີນສີດພົ່ນເຂົ້າທາງດັງ) ຍັງມີໄວ້ໃຫ້ທ່ານໃຊ້. ຊຶ່ງຈະອະທິບາຍໄວ້ໃນເອກະສານ ອື່ນຕ່າງຫາກ.

ວັກຊີນສາຍພັນ H1N1 2009 ຊະນິດເຊື້ອຕາຍ ບາງອັນປະກອບດ້ວຍສານກັນບູດຊຶ່ງເອີ້ນວ່າ ສານທີເມີໂຣໂຊນ (thimerosal) ເພື່ອປ້ອງກັນ ເຊື້ອພະຍາດ. ບາງຄົນໄດ້ແນະນຳວ່າ ສານທີເມີໂຣໂຊນ ອາດກ່ຽວຂ້ອງກັບໂຣກ ປັນຍາອ່ອນ (autism). ໃນປີ 2004 ກຸ່ມຜູ້ຊ່ຽວຊານທີ່ສະຖາບັນການແພດໄດ້ທົບທວນເບິ່ງຜົນການສຶກສາຫຼາຍອັນເພື່ອສຶກສາເບິ່ງສະເພາະທິດສະດີກ່ຽວກັບເລື່ອງນີ້, ແລະພົບວ່າ ບໍ່ມີການ ກ່ຽວພັນກັນຫຍັງລະຫວ່າງສານທີເມໂຣໂຊນ ແລະ ໂຣກ ປັນຍາອ່ອນ. ຫຼັງຈາກນັ້ນຍັງມີການສຶກສາເພີ່ມເຕີມ ຊຶ່ງກໍໄດ້ມີການສະຫຼຸບຜົນແບບດຽວກັນນີ້.

## 4 ໃຜຄວນຮັບການສັກວັກຊີນປ້ອງກັນໄຂ້ຫວັດໃຫຍ່ສາຍພັນ H1N1 2009 ແລະເມື່ອໃດ?

### ໃຜ

ກຸ່ມຄົນທີ່ແນະນຳໃຫ້ຮັບການສັກຢາວັກຊີນສາຍພັນ H1N1 2009 ກ່ອນໝູ່ແມ່ນ:

- ຜູ້ຍິງຖືພາ
- ຜູ້ທີ່ອາໃສຢູ່ກັບ ຫຼື ດູແລ ເດັກທາຣົກທີ່ມີອາຍຸຕ່ຳກວ່າ 6 ເດືອນ
- ເຈົ້າໜ້າທີ່ດູແລສຸຂະພາບ ແລະເຈົ້າໜ້າທີ່ຊ່ວຍເຫຼືອດ້ານການແພດສຸກເສີນ
- ຜູ້ໃດກໍໄດ້ທີ່ມີອາຍຸຕັ້ງແຕ່ 6 ເດືອນ ຮອດ 24 ປີ
- ຜູ້ໃດກໍໄດ້ທີ່ມີອາຍຸແຕ່ 25 ປີ ຮອດ 64 ປີ ຊຶ່ງເປັນຜູ້ມີບັນຫາທາງການດ້ານສຸຂະພາບແບບຊຳເຮື້ອ ຫຼື ມີລະບົບພູມຕ້ານທານຮ່າງກາຍອ່ອນແອ

ເມື່ອໃດຫາກມີວັກຊີນໃຫ້ໃຊ້ຫຼາຍຂື້ນ ກຸ່ມເຫຼົ່ານີ້ຄວນໄດ້ຮັບການສັກຢາວັກຊີນອີກດ້ວຍ:

- ຜູ້ທີ່ມີສຸຂະພາບແຂງແຮງດີທີ່ມີອາຍຸ 25 ຮອດ 64 ປີ
- ຜູ້ໃຫຍ່ທີ່ມີອາຍຸ 65 ປີຂື້ນໄປ

ຣັຖບານກາງກຳລັງຈັດຫາຢາວັກຊີນນີ້ເພື່ອແຈກຢາຍໃຫ້ແກ່ຜູ້ທີ່ຕ້ອງການດ້ວຍຄວາມສະໝັກໃຈ. ແຕ່ຢ່າງໃດກໍຕາມ, ຕາມກົດໝາຍຣັຖ ຫຼື ນາຍຈ້າງ ອາດຮຽກຮ້ອງໃຫ້ສະເພາະບາງຄົນໄປຮັບການສັກຢາວັກຊີນ.

### ເມື່ອໃດ

ໄປຮັບການສັກຢາວັກຊີນທັນທີທີ່ມີວັກຊີນໃຫ້ສັກ.

ເດັກນ້ອຍທີ່ອາຍຸຈົນຮອດ 9 ປີ ຄວນສັກຢາວັກຊີນ**ສອງຊຸດ**, ໂດຍຫ່າງກັນປະມານໜຶ່ງເດືອນ. ເດັກທີ່ສູງອາຍຸກວ່າ ແລະຜູ້ໃຫຍ່ຕ້ອງການສັກຢາວັກຊີນ ພຽງຊຸດດຽວເທົ່ານັ້ນ.

2009 H1N1 Inactivated influenza vaccine- Laotian 10/2/09

## 5 ບາງຄົນບໍ່ຄວນຮັບການສັກວັກຊີນ ຫຼື ຄວນລໍຖ້າ

ທ່ານບໍ່ຄວນສັກຢາວັກຊີນປ້ອງກັນໄຂ້ຫວັດໃຫຍ່ສາຍພັນ H1N1 2009 ຖ້າຫາກ ທ່ານມີ **ອາການແພ້ຮຸນແຮງ (ເຖິງຂັ້ນເປັນອັນຕະລາຍຕໍ່ ຊີວິດ)** ຕໍ່ **ໄຂ່**, ຫຼື **ຕໍ່ສານອື່ນໆທີ່ຢູ່ໃນວັກຊີນ.** *ຈົ່ງບອກບຸກຄົນທີ່ສັກຢາວັກຊີນໃຫ້ທ່ານ ຖ້າຫາກ ທ່ານມີອາການແພ້ຮຸນແຮງໃດໆ.*

ນອກຈາກນີ້ ຈົ່ງບອກເພີ່ມເຂັ້ມຕ່ອວກັນ ຖ້າຫາກ ທ່ານເຄີຍມີ:

- ອາການແພ້ທີ່ເປັນອັນຕະລາຍເຖິງຊີວິດ ຫຼັງຈາກ ສັກຢາວັກຊີນປ້ອງກັນໄຂ້ຫວັດໃຫຍ່ຕາມລະດູການໄປໜຶ່ງຊຸດແລ້ວ,
- ໂຣກ Guillain-Barré Syndrome (ການເຈັບເປັນກ່ຽວກັບອຳມະພາດທີ່ຮຸນແຮງ ຊຶ່ງເອີ້ນວ່າ GBS).

ສິ່ງເຫຼົ່ານີ້ອາດບໍ່ແມ່ນເຫດຜົນໃນການຫຼີກເວັ້ນການສັກຢາວັກຊີນ, ແຕ່ວ່າ ເຈົ້າໜ້າທີ່ດ້ານການແພດກໍສາມາດຊ່ວຍທ່ານຕັດສິນໃຈໄດ້.

ຖ້າຫາກ ທ່ານເຈັບເປັນຂັ້ນປານກາງ ຫຼື ຮຸນແຮງ, ທ່ານອາດໄດ້ຮັບຄຳແນະນຳວ່າ ໃຫ້ລໍຖ້າຈົນກວ່າທ່ານຈະຫາຍປ່ວຍ ກ່ອນ ທີ່ຈະຮັບການສັກຢາວັກຊີນ. ຖ້າຫາກ ທ່ານເປັນຫວັດເລັກນ້ອຍ ຫຼື ເຈັບເປັນແນວອື່ນ, ທຳມະດາແລ້ວ ບໍ່ຈຳເປັນຕ້ອງລໍຖ້າ.

ຜູ້ຍິງຖືພາ ຫຼື ຜູ້ຍິງທີ່ລ້ຽງລູກດ້ວຍນົມຕົນເອງ ສາມາດຮັບການສັກຢາວັກຊີນສາຍພັນ H1N1 2009 ຊະນິດເຊື້ອຕາຍໄດ້.

ວັກຊີນສາຍພັນ H1N1 2009 ຊະນິດເຊື້ອຕາຍ ສາມາດສັກໄດ້ພ້ອມດຽວກັນກັບການສັກວັກຊີນອື່ນໆ, ລວມທັງ ວັກຊີນປ້ອງກັນ ໄຂ້ຫວັດໃຫຍ່ຕາມລະດູການ.

## 6 ແມ່ນຫຍັງຄືຄວາມສ່ຽງຈາກການສັກຢາວັກຊີນປ້ອງກັນໄຂ້ຫວັດໃຫຍ່ສາຍພັນ H1N1 2009?

ຢາວັກຊີນນີ້ ຄືກັບຢາຊະນິດອື່ນໆ, ສາມາດເຮັດໃຫ້ເກີດບັນຫາຮ້າຍແຮງໄດ້, ເຊັ່ນ ເຮັດໃຫ້ມີອາການແພ້ຢ່າງຮຸນແຮງ. ແຕ່ຄວາມສ່ຽງຈາກວັກຊີນທີ່ຈະເຮັດໃຫ້ເກີດອັນຕະລາຍຮ້າຍແຮງນັ້ນ, ຫຼື ເຮັດໃຫ້ເສັຽຊີວິດນັ້ນ, ແມ່ນມີໜ້ອຍຫຼາຍ.

ໄວຣັສໃນຢາວັກຊີນສາຍພັນ H1N1 2009 ຊະນິດເຊື້ອຕາຍແມ່ນຖືກຂ້າຕາຍແລ້ວ, ສະນັ້ນ ທ່ານບໍ່ສາມາດເປັນໄຂ້ຫວັດໃຫຍ່ ໄດ້ເນື່ອງຈາກການສັກຢາວັກຊີນນີ້.

ຄວາມສ່ຽງຕ່າງໆ ຈາກວັກຊີນສາຍພັນ H1N1 2009 ຊະນິດເຊື້ອຕາຍ ແມ່ນຄ້າຍຄືກັບວັກຊີນປ້ອງກັນໄຂ້ຫວັດຕາມລະດູການ ຊະນິດເຊື້ອຕາຍ:

**ບັນຫາເລັກນ້ອຍຕ່າງໆ:**

- ເຈັບ, ເປັນຜື່ນແດງ, ຊ້ຳ, ຫຼື ບວມ ໃນບໍລິເວນທີ່ສັກຢາວັກຊີນ
- ເປັນລົມ (ສ່ວນຫຼາຍໄວໜຸ່ມ)
- ປວດຫົວ, ປວດເມື່ອຍກ້າມຊີ້ນ • ເປັນໄຂ້ • ປວດຮາກ

ຖ້າຫາກ ບັນຫາເຫຼົ່ານີ້ເກີດຂຶ້ນ, ທຳມະດາແລ້ວ ມັກຈະເລີ້ມເປັນທັນທີຫຼັງຈາກສັກຢາ ແລະເປັນປະມານ 1-2 ມື້.

**ບັນຫາຮ້າຍແຮງ:**

- ອາການແພ້ທີ່ເປັນອັນຕະລາຍເຖິງຊີວິດຊຶ່ງເກີດຈາກການໃຊ້ວັກຊີນ ແມ່ນມີໜ້ອຍຫຼາຍ. ຖ້າຫາກວ່າ ເກີດຂຶ້ນ, ທຳມະດາຈະເກີດຂຶ້ນພາຍໃນສອງສາມນາທີ ຈົນເຖິງສອງສາມຊົ່ວໂມງ ຫຼັງຈາກສັກຢາວັກຊີນນີ້ແລ້ວ.

- ໃນປີ 1976, ຢາວັກຊີນໄຂ້ຫວັດໝູຊະນິດເຊື້ອຕາຍທີ່ມີກ່ອນໜ້ານີ້ ແມ່ນມີຄວາມກ່ຽວພັນກັບກໍລະນີຂອງໂຣກ Guillain-Barré Syndrome (GBS). ນັບແຕ່ນັ້ນມາ, ວັກຊີນໄຂ້ຫວັດໃຫຍ່ກໍບໍ່ມີຄວາມກ່ຽວພັນຢ່າງຈະແຈ້ງຕໍ່ກັບໂຣກ GBS.

## 7 ຈະເຮັດແນວໃດ ຖ້າຫາກ ມີອາການແພ້ຮຸນແຮງ?

**ຂ້າພະເຈົ້າຄວນຟັງເບິ່ງອາການໃດ?**

ອາການຜິດປົກກະຕິໃດໆ, ເຊັ່ນ ເປັນໄຂ້ຂຶ້ນສູງ ຫຼື ຄວາມປະພຶດປ່ຽນແປງ. ອາການແພ້ຮຸນແຮງສາມາດລວມມີ ຫາຍໃຈຍາກ, ສຽງແຫບ ຫຼື ຫາຍໃຈຫອບ, ອາການໂຣກລົມພິດ, ໜ້າຊີດ, ອ່ອນເພັຽ, ຫົວໃຈເຕັ້ນໄວ ຫຼື ວິນຫົວ.

**ຂ້າພະເຈົ້າຄວນເຮັດຫຍັງແດ່?**

- **ໂທຣ**ຫາທ່ານໝໍ, ຫຼື ໄປພາຄົນເຈັບໄປຫາໝໍທັນທີ.
- **ຈົ່ງບອກ**ທ່ານໝໍວ່າເກີດຫຍັງຂຶ້ນ, ເກີດຂຶ້ນວັນທີແລະເວລາໃດ, ແລະ ເມື່ອໃດທີ່ໄດ້ສັກຢາວັກຊີນ.
- **ຂໍ**ໃຫ້ຜູ້ໃຫ້ບໍລິການຂອງທ່ານລາຍງານອາການແພ້ ໂດຍການຂຽນໃສ່ ໃນແບບຟອມລະບົບລາຍງານອາການທີ່ບໍ່ດີ ຫຼື ການເກີດຜົນຂ້າງຄຽງຈາກການໃຊ້ຢາວັກຊີນ (Vaccine Adverse Event Reporting System, VAERS). ຫຼື ທ່ານສາມາດຍື່ນລາຍງານນີ້ຜ່ານເວັບໄຊ VAERS ທີ່ **www.vaers.hhs.gov**, ຫຼື ໂທຫາເບີ **1-800-822-7967**.

*VAERS ບໍ່ສະໜອງຄຳແນະນຳທາງການແພດ.*

## 8 ການຈ່າຍຄ່າຊົດເຊີຍການບາດເຈັບໃນການສັກຢາວັກຊີນນີ້

ຖ້າຫາກ ທ່ານ ຫຼື ລູກຂອງທ່ານມີອາການແພ້ຕໍ່ຢາວັກຊີກ, ທ່ານສາມາດຟ້ອງຮ້ອງໄດ້ພາຍໃຕ້ກົດໝາຍ ຢ່າງຈຳກັດ.

ຢ່າງໃດກໍຕາມ, ໂຄງການຂອງຣັຖບານກາງໄດ້ຖືກສ້າງຂຶ້ນມາເພື່ອຊ່ວຍຈ່າຍຄ່າປິ່ນປົວ ແລະຄ່າໃຊ້ຈ່າຍສະເພາະອື່ນໆ ຂອງບາງກຸ່ມຄົນທີ່ມີອາການແພ້ຮຸນແຮງຕໍ່ຢາວັກຊີນນີ້. ສຳຫຼັບຂໍ້ມູນເພີ້ມຕື່ມກ່ຽວກັບໂຄງການນີ້, ຈົ່ງໂທໄປ **1-888-275-4772** ຫຼື ໄປທີ່ເວັບໄຊຂອງໂຄງການທີ່: **www.hrsa.gov/countermeasurescomp/default.htm**.

## 9 ຂ້າພະເຈົ້າສາມາດຮຽນຮູ້ຕື່ມໄດ້ແນວໃດ?

- ຖາມຜູ້ໃຫ້ບໍລິການຂອງທ່ານ. ເຂົາເຈົ້າສາມາດໃຫ້ໃບຊຸດຂໍ້ມູນກ່ຽວກັບວັກຊີນ ຫຼື ແນະນຳແຫຼ່ງຂໍ້ມູນອື່ນໆໃຫ້ທ່ານໄດ້.

- ໂທຣຫາ ພະແນກສຸຂະພາບປະຈຳທ້ອງຖິ່ນ ຫຼື ຣັຖ.

- ຕິດຕໍ່ສູນຄວບຄຸມແລະປ້ອງກັນໂຣກ (Centers for Disease Control and Prevention, CDC):
  - ໂທຣ **1-800-232-4636 (1-800-CDC-INFO)** ຫຼື
  - ເຂົ້າເບິ່ງໃນເວັບໄຊຂອງ CDC ທີ່ **www.cdc.gov/h1n1flu** ຫຼື **www.cdc.gov/flu**

- ເຂົ້າເບິ່ງໃນເວັບໄຊ **www.flu.gov**

DEPARTMENT OF HEALTH AND HUMAN SERVICES
CENTERS FOR DISEASE CONTROL AND PREVENTION

Vaccine Information Statement
2009 H1N1 Inactivated Influenza Vaccine IMM-980LAO– Laotian (10/2/09) 42 U.S.C. §300aa-26
Translated by Transcend Translations, Davis, CA www.transcend.net